# ເດັກພິການສົງຄາມ ຫລັງປີ ໑໙໕໔

## ຄວາມຊົງຈຳພາກ I



ໂດຍ: ວັງສະມຸດ ສິງເກີດ

# ເດັກພິການຫູ້ງສົງຄາມປີ 1956

(ຄວາມຊົງຈຳ ພາກ I)

**ຄົບຮອບ 50 ປີ**

**ເພື່ອເປັນການປະກອບສ່ວນສະເຫຼີມ**
**ສະຫຼອງວັນຄົນພິການສາກົນ**

**ວັນທີ່ 27 ມັງກອນ 2008**

(ສະຫງວນລິຂະສິດໃນການພິມຈຳໜ່າຍ)

ໂດຍ : ວັງສະມຸດ ສິງເກີດ

ພິມເບື້ອງຕົ້ນຈຳນວນ 1 000 ເຫຼັ້ມ, ຂະໜາດ 21x15
ພິມທີ່ໂຮງພິມ ມັນທາຕຸລາດ
ເລກທະບຽນພິມ: 122/ພຈ/2007 ລົງວັນທີ່ 31/07/2007

## ຄຳນຳຜູ້ຂຽນ

ຂໍເຊີນທ່ານສຳພັດກັບຊີວິດເດັກພິການສົງຄາມຜູ້ໜຶ່ງທີ່ໂຊກຮ້າຍ, ຖືກຍ່ຳຍີຈົນຄອບຄົວແຕກສະຫຼາຍຊ້ຳແລ້ວຊ້ຳອີກຈາກສົງຄາມທີ່ບໍ່ເຄີຍປານີຜູ້ໃດ, ນອກຈາກໂປມດ້ອຍຈາກຄວາມເປັນພິການສົງຄາມແລ້ວກໍຍັງຖືກໝູ່ຄູ່ຮ່ວມຫ້ອງກໍຄືຮ່ວມໂຮງຮຽນດູຖູກເວົ້າສຽດສີຕະຫຼອດໄລຍະຮຽນໜັງສື ແຕ່ເຂົາກໍກັດແຂ້ວຜ່ານຜ່າມາໄດ້ 20 ປີ, ຈົນ ວ່າໃນທີ່ສຸດ, ໂປມດ້ອຍພິການນັ້ນບໍ່ໄດ້ເປັນອຸປະສັກຕໍ່ການຮຽນແລະການດຳລົງຊີວິດອີກແລ້ວ, ໄດ້ສຳເລັດການສຶກສາຢ່າງສະຫງ່າ ແລະໄດ້ກາຍມາເປັນພະນັກງານຜູ້ໜຶ່ງທີ່ປະກອບສ່ວນຢ່າງຕັ້ງໜ້າໃຫ້ແກ່ຄອບຄົວກໍຄືສັງຄົມແລະການຈັດຕັ້ງ.

ວັງສະມຸດ ສິງເກີດ

## ຄຳນິຍົມ

ການໄດ້ອ່ານຊີວິດຂອງຄົນຄົນໜຶ່ງເຊິ່ງປະສົບຄວາມສຳເລັດມາແລ້ວນັບວ່າເປັນບົດຮຽນລ້ຳຄ່າແກ່ຜູ້ອ່ານສະເໝີ.

ການຂຽນເລົ່າເລື່ອງຊີວິດສ່ວນຕົວໂດຍເຈົ້າຂອງເລື່ອງເອງ ເອີ້ນກັນວ່າບົດ "ອັດຕະຊີວະປະຫວັດ" ແຕ່ເລື່ອງ "ເດັກພິການສົງຄາມທ້າຍປີ 1956" ຂອງວັງສະມຸດ ສິງເກີດ ເຫຼັ້ມນີ້ ບໍ່ພຽງແຕ່ບອກກ່າວເລື່ອງລາວສ່ວນຕົວ ແຕ່ຫາກມີຂໍ້ມູນປະຫວັດສາດອັນສຳຄັນ ໃຫ້ພາບບັນຍາກາດຂອງດິນແດນຖິ່ນເກີດອູ່ກຳເນີດ ແລະຖານທີ່ໝັ້ນຂອງການປະຕິວັດຊາດປະຊາທິປະໄຕລາວ.

ສົງຄາມອາດຕັດແບ່ງແຍກເອົາອະໄວຍະວະສ່ວນໜຶ່ງອອກຈາກຮ່າງກາຍເຂົາໄດ້ ແຕ່ມັນບໍ່ສາມາດແຍກເອົາຈິດໃຈແລະວິນຍານຂອງເຂົາໃຫ້ຂາດອອກຈາກຜືນແຜ່ນດິນມາຕຸພູມແຫ່ງນີ້ໄດ້.

ຂອບໃຈ ວັງສະມຸດ ທີ່ມີຄວາມມານະບຸກບືນຂຽນເລົ່າບົດຮຽນຫາຍາກແບບນີ້ ອອກມາຢ່າງໜ້າຈັບໃຈ.

ວຽງຈັນ, ວັນທີ 6 ສິງຫາ 2007

ດວງເດືອນ ບຸນຍະວົງ

# ຄຳຊົມເຊີຍ

ຮຽນ ທ່ານຜູ້ອ່ານ,

ຜູ້ກ່ຽວຂຽນປຶ້ມຫົວນີ້ຂຶ້ນມາ ແມ່ນຂຽນດ້ວຍຄວາມບໍລິສຸດຕົວຈິງຂອງຫົວໃຈ, ຂໍຊົມເຊີຍມານະໂອກາດນີ້ເປັນຢ່າງສູງ, ຄວາມຕັ້ງໃຈ ຄວາມອົດທົນຄວາມບຸກບືນຜ່ານຜ່າຕໍ່ອຸປະສັກນາໆປະການຈະນຳພາໄປສູ່ຄວາມສຳເລັດທຸກຢ່າງ.. ບໍ່ວ່າສຸກຂະພາບຮ່າງກາຍ ອະໄວຍະວະບາງສ່ວນຈະບໍ່ຄົບຊຸດສົມບູນແບບກໍບໍ່ເປັນຜົນສະທ້ອນແຕ່ຢ່າງໃດ! ສຳຄັນແມ່ນແນວຄິດຈິດໃຈເຂັ້ມແຂງແມ່ນເລີດແລ້ວ.

ທຸກຢ່າງຂໍຊົມເຊີຍມານະໂອກາດນີ້ເປັນຢ່າງສູງ, ຮັກແພງແລະເຫັນດີ.

ວຽງຈັນ, ວັນທີ 16/08/2007 ອ.ຈ. ສາລີ ສີມົງຄຸນ

(ອະດີດຄູສອນບຳລຸງພາສາຝຣັ່ງຂອງຜູ້ຂຽນ)

ເຖິງ ທ່ານ ວັງສະມຸດ !

- ໄດ້ອ່ານຊີວິດຈິງຂອງຄົນຄົນໜຶ່ງຊຶ່ງມີຄວາມອາພັບແລະມີຄວາມປົມດ້ອຍມາແຕ່ອາຍຸໄດ້ 4 ປີ: ດ້ວຍຄວາມອົດທົນພະຍາຍາມແລະຕໍ່ສູ້ກັບສະພາວະທີ່ຕົນພົບໃນເວລານັ້ນ ຈົນໄດ້ຮັບຜົນສຳເລັດ, ມີຄວາມສຳຄັນເປັນບົດຮຽນຕໍ່ຊີວິດແລະມີຄຸນຄ່າມະຫາສານທີ່ສຸດ. ຖືກກັບຄຳສຸພາສິດທີ່ວ່າ " ເກົ້າອົດເກົ້າເຍື້ອນຫາກຈະໄດ້ທ່ອນຄຳ" ເປັນຄຳສອນໃຫ້ຄົນຮູ້ຈັກຊີວິດ: ມີຄວາມມານະອົດທົນ ມີການຕໍ່ສູ້ແລະມີຜົນສຳເລັດ.

ວຽງຈັນ, ວັນທີ 10/08/2007 ທ່ານ ບຸນມີ ກະຊວງກະສິກຳແລະປ່າໄມ້

# ສາລະບານ


| | ຊື່ເລື່ອງ | ໜ້າ |
|---|---|---|
| 1 | ຄຳເຫັນຂອງຜູ້ຂຽນ | 1 |
| 2 | ທີ່ມາຂອງເລື່ອງ | 3 |
| 3 | ມື້ຝັນຮ້າຍຂອງຊີວິດ | 4 |
| 4 | ທີ່ໂຮງໝໍມະໂຫສົດວຽງຈັນ | 6 |
| 5 | ຄວາມສັບສົນຊ້ຳເຕີມ | 11 |
| 6 | ກັບຄືນສູ່ບ້ານເກີດ | 14 |
| 7 | ພັດພາກຈາກບ້ານເກີດຮອບທີ່ສອງ | 22 |
| 8 | ກັບຄືນສູ່ວຽງຈັນແລະຈົບປະຖົມ | 33 |
| 9 | 4 ປີໃນໂຮງຮຽນສ້າງຄູຊັ້ນຕົ້ນ | 37 |
| 10 | ຊີວິດ 3 ປີໃນໂຮງຮຽນສ້າງຄູຊັ້ນກາງ | 55 |
| 11 | ໄປຢາມນາຍຄູເກົ່າ | 60 |
| 12 | ລົງຝຶກຫັດວິຊາຊີບຢູ່ວິທະຍາໄລຄູ | 71 |
| 13 | ໄປທ່ຽວເມືອງເໜືອ | 78 |
| 14 | ບິນໄປຫຼິ້ນພາກໃຕ້ທີ່ປາກເຊ | 87 |
| 15 | ຊີວິດໃນສະຖາບັນວິຊາຄູຊັ້ນສູງພາກຕົ້ນ 1972-74 | 108 |
| 16 | ເຫດການສອງຄືນນັ້ນທີ່ແຈຫໍພັກນັກຮຽນຍິງ | 114 |
| 17 | ເສັງຈົບຄູຊັ້ນສູງພາກຕົ້ນ | 118 |
| 18 | ແສງທຽນຍັງບໍ່ມອດ | 121 |
| 19 | ຄວາມຝັນປັນຄວາມຈິງ | 124 |
| 20 | ປີສຸດທ້າຍຂອງການສຶກສາ | 131 |
| 21 | ຮູບພາບປະກອບ | 135 |
| 22 | ຄວາມຄາດຫວັງໃນອະນາຄົດ | 136 |
| 23 | ປະຫວັດຫຍໍ້ຂອງຜູ້ຂຽນ | 138 |

# ເດັກພິການຫູ້ງສົງຄາມປີ 1956
## ໃນຊຸດຄວາມຊົງຈຳພາກ I

*ຜົນງານອັນນ້ອຍໆທີ່ຂຽນຂຶ້ນມານີ້ ຂໍອຸທິດແດ່ພໍ່ແລະແມ່*
*ເອື້ອຍແລະນ້ອງສາວ ທີ່ເປັນເຫຍື່ອຂອງສົງຄາມຜ່ານມາ*

## ຄຳເຫັນຂອງຜູ້ຂຽນ

ຈຸດປະສົງຂອງການຂຽນປຶ້ມ **ເດັກພິການຫູ້ງສົງຄາມປີ 1956** ໃນຊຸດ **ຄວາມຊົງຈຳ** ຄົບຮອບ 50 ປີ (1956-2006) ນີ້ ມີສອງຈຸດປະສົງ ໃຫຍ່ຄື:

1- ເພື່ອເປັນການປຸກລະດົມແລະໃຫ້ກຳລັງໃຈຄົນພິການ ກໍຄືຄົນເສຍອົງຄະທຸກປະເພດ ທີ່ເປັນສ່ວນນ້ອຍໜຶ່ງຂອງສັງຄົມ, ໃນນັ້ນ ອາດເປັນພໍ່ເປັນແມ່ ເປັນລູກ ເປັນອ້າຍເອື້ອຍນ້ອງ, ຊຶ່ງຈຳນວນໜຶ່ງອາດມີໂປມດ້ອຍຍ້ອນຄວາມເປັນພິການຫຼືເສຍອົງຄະຂອງຕົນ, ບໍ່ກ້າອອກມາເຄື່ອນໄຫວໃນສັງຄົມ, ບໍ່ກ້າຮຽກຮ້ອງສິດອັນຊອບດ້ວຍກົດໝາຍຂອງຕົນ, ບໍ່ກ້າຜ່ານຜ່າສິ່ງກີດຂວາງໃນສັງຄົມ ບໍ່ກ້າສະແດງຄວາມອາດສາມາດບົ່ມຊ້ອນຂອງຕົນອອກມາໃຫ້ເປັນປະໂຫຍດ ແກ່ຕົນເອງແລະປະເທດຊາດ ຈົມຢູ່ແຕ່ໃນວົງແຄບຂອງຄອບຄົວ, ເປັນພາລະໃຫ້ຄອບຄົວກໍຄືສັງຄົມ ທັ້ງໆທີ່ຕົນເອງກໍເປັນພົນລະເມືອງ ຜູ້ໜຶ່ງທີ່ມີສິດສະເໝີພາບ ກັບຄົນອື່ນໆ. ເຮົາຕ້ອງບຸກບືນ ດີ້ນລົນ ຊອກຫາພອນສະແຫວງຄຽງຄູ່ກັບພອນສະຫວັນຂອງເຮົາວ່າຈະພໍເຮັດຫຍັງໄດ້ແດ່, ຈາກນັ້ນກໍສູ້ຊີວິດດ້ວຍຕົນເອງກ່ອນ, ຖ້າໄປບໍ່ລອດແທ້ໆ ຈຶ່ງຂໍຄວາມຊ່ວຍເຫຼືອຈາກຜູ້ອື່ນ ຫຼືສັງຄົມເວລານັ້ນ ແນ່ນອນທີ່ສຸດຄວາມຊ່ວຍເຫຼືອຈາກພາຍນອກບໍ່ໄດ້ຫຼາຍກໍຕ້ອງໄດ້ໜ້ອຍ ໝາຍຄວາມວ່າ ຕ້ອງສ້າງເງື່ອນໄຂຕົວເອງກ່ອນ ຄືກັນກັບການເຮັດການປະຕິວັດປົດປ່ອຍປະເທດຊາດ, ຖ້າວ່າລໍຖ້າແຕ່ການຊ່ວຍເຫຼືອຈາກພາຍນອກ ຕົນເອງບໍ່ເຮັດ

ຫຍັງກໍໄປບໍ່ລອດ, ຕົນເອງຕ້ອງເປັນເຈົ້າການສ້າງເງື່ອນໄຂ ສ່ວນຜູ້ອື່ນເປັນພຽງອັນປະກອບ ໂດຍສະເພາະແມ່ນຄົນພິການ ຫຼືເສຍອົງຄະທີ່ຍັງໜຸ່ມນ້ອຍຍັງມີອະນາຄົດຍາວນານ ລໍຖ້າຢູ່ແຮ່ງຈະຕ້ອງໄດ້ຕັດສິນໃຈລຸກຂຶ້ນສູ້ຊີນ ປົດປ່ອຍໂປມດ້ອຍຈາກຕົວເອງ, ສ້າງຕົນເອງໃຫ້ເປັນສ່ວນໜຶ່ງຂອງສັງຄົມ ເພື່ອພ້ອມກັນສ້າງສາພັດທະນາປະເທດຊາດ, ຊຶ່ງແນ່ນອນ ການທີ່ຈະເຮັດໄດ້ແນວນັ້ນກໍຕ້ອງອີງໃສ່ການຊ່ວຍເຫຼືອເຫັນອົກເຫັນໃຈແລະໃຫ້ໂອກາດຂອງຄອບຄົວກໍຄືສັງຄົມ.

2- ເພື່ອສະແດງຄວາມຮູ້ບູນຄູນ ແລະຈາລຶກຄຸນງາມຄວາມດີ ຂອງບັນດາທ່ານ ທີ່ໄດ້ຊ່ວຍເຫຼືອອຸ້ມຊູທາງດ້ານແຮງຊັບ, ດ້ານວັດຖຸ, ດ້ານແນວຄິດ ກໍຄືດ້ານກໍາລັງໃຈແລະ ສະຕິປັນຍາສ້າງເງື່ອນໄຂຕື່ມໃສ່ຄວາມຕັ້ງໃຈບຸກບືນສູ້ຊີນຂອງຂ້າພະເຈົ້າ, ເຮັດໃຫ້ສາມາດຜ່ານ ຜ່າຄວາມຫຍຸ້ງຍາກ ນານາປະການ ຈາກເດັກນ້ອຍພິການສິງຄາມມາເປັນປັນຍາຊົນປະກອບສ່ວນ ຢ່າງພາກພູມໃຈເຂົ້າໃນສັງຄົມ, ກາຍມາເປັນສ່ວນໜຶ່ງທີ່ສໍາຄັນ ຂອງຄອບຄົວ ຂອງສັງຄົມກໍຄື ຂອງປະເທດຊາດ, ຫຼຸດພົ້ນຈາກໂປມດ້ອຍພິການ ຢ່າງຂາດລອຍ.

ພ້ອມກັນນີ້, ຂ້າພະເຈົ້າຂໍອະນຸຍາດເອີ່ຍຊື່ບາງທ່ານ ທີ່ຂ້າພະເຈົ້າຈາລຶກບໍ່ມີວັນລືມ ດັ່ງຕໍ່ໄປນີ້ : ພໍ່ລຸງໃຫຍ່ຕົ໋ວ, ຄອບຄົວ ທ່ານ ຄໍາຄ່ອງວົງນາລາດ, ທ່ານ ຄູຕູດ, ນາຍຄູສາລີ, ຄອບຄົວ ພໍ່ອາຕີ, ຄອບຄົວພໍ່ລຸງເກດ, ພິເສດສຸດໆ ຄອບຄົວທ່ານຄໍາປິນແລະຄອບຄົວອື່ນໆ ພ້ອມດ້ວຍໝູ່ຄູ່ ທີ່ໄດ້ໃຫ້ຄວາມຊ່ວຍເຫຼືອອັນປະເສີດໃນໄລຍະຜ່ານມາ.

# ທີ່ມາຂອງເລື່ອງ

ຂ້າພະເຈົ້າກຳເນີດເກີດຂຶ້ນປະມານກາງປີ 1951*, ໃນຄອບຄົວຊົນນະບົດຫ່າງໄກຈາກຕົວເມືອງຊຳເໜືອປະມານຫ້າຫຼັກທາງໃຫຍ່ ແລະລ້ຽວຊ້າຍຄ່ອຍຍ່າງໄປຕາມທາງໄປໄຮ່ໄປນາແບບຊົນນະບົດ, ທັງຄິດທັງລ້ຽວໄປຕາມປ່າຄ້າງ, ປ່າເຫຼົ່າ, ໄຮ່ເກົ່າ ຂຶ້ນພູ ລົງຫ້ວຍ ບາງບ່ອນຂ້າມຫ້ວຍນ້ອຍ ກໍ່ຕ້ອງໄດ້ໄຕ່ໄມ້ລຳດຽວ ໜ້າຫວາດສຽວແທ້ໆ. ຖ້າວ່າ ແມ່ນຍາມຝົນ ແຮ່ງເພີ່ມຄວາມຢ້ານມື່ນພະລາດເຂົ້າໄປອີກ. ແຕ່ຕີນພູກ້ຽວໄປວຽນມາຈົນເທື່ອຊັດອອກ, ຈຶ່ງຮອດບ້ານຫ້ວຍເທົາສະໄໝ 1956 ນັ້ນ, ລວມແລ້ວ ໄກຈາກຊຳເໜືອໄປປະມານແປດຫຼັກໃນຄອບຄົວມີດ້ວຍກັນ 5 ຄົນ ຄື: ແມ່, ອ້າຍ, ເອື້ອຍແລະນ້ອງສາວ, ພາກັນເປັນກຳພ້າພໍ່. ເພິ່ນເສຍແຕ່ຕອນຂ້າພະເຈົ້າອາຍຸໄດ້ສອງຂວບ, ຍັງບໍ່ມີໂອກາດເຫັນໜ້າຊໍ້າວ່າເປັນຜູ້ແນວໃດ. ແຕ່ກໍ່ຍັງດີ ຍ້ອນມີຄອບຄົວຂອງ ລຸງໃຫຍ່, ລຸງກາງຢູ່ໃກ້ກັນຫຼາຍຄອບຄົວພໍໄດ້ ຊ່ວຍເຫຼືອກັນເວລາຫຍຸ້ງຍາກຫຼືເຈັບໄຂ້ໄດ້ປ່ວຍຄືກັນກັບວ່າແມ່ນໄທເຮືອນຮ່ວມພໍ່ແມ່ດຽວກັນ.

ເວົ້າແທ້, ບ້ານກໍ່ເປັນບ້ານນ້ອຍ ບໍ່ໃຫຍ່ໂຕມະໂຫຖານດອກ, ມີປະມານສິບຫຼັງຄາເຮືອນ, ມີເສັ້ນທາງຫຼັກ ເຂົ້າອອກບ້ານສາມເສັ້ນຄື: ເສັ້ນໃຕ້ໄປຫາຫ້ວຍນ້ຳໄສເຢັນດີ ທີ່ຊາວບ້ານທຽວໄປຕັກເຊົ້າຕັກແລງເພື່ອມາຮັບໃຊ້ໃນຊີວິດປະຈຳວັນ. ເສັ້ນທີ່ສອງ ອອກໄປທາງຂວາມື ມຸ່ງໜ້າໄປເມືອງຊຳ ດັ່ງທີ່ກ່າວຢູ່ເບື້ອງຕົ້ນ. ເສັ້ນທີ່ສາມອອກທາງຊ້າຍມືໄປປະມານຮ້ອຍແມັດກໍ່ແບ່ງອອກໄປເລື້ອຍໆເປັນຫຼາຍສາຍປານງ່າໄມ້, ຊຶ່ງທັງໝົດນີ້ແມ່ນເສັ້ນທາງໄປ

---

* ໃສ່ປະມານໃນນີ້ຍ້ອນວ່າແຕກເສິກ ແຕກເສືອຫຼາຍເທື່ອໂພດ, ໃບຊະຕາເສຍໝົດ, ພໍ່ແມ່ກໍເສຍ ບໍ່ຮູ້ວ່າວັນເດືອນປີເກີດແທ້ນັ້ນ ແມ່ນເລກໂຕໃດແດ່, ແຕ່ກໍຄິດເສຍວ່າອາຍຸແທ້ ຫຼື ສົມມຸດກໍລ້ວນ ແຕ່ແມ່ນຕົວເລກ ທັງນັ້ນ

ໄຮ່ໄປນາ ຫາຫຼົວຫາຟືນປະຈຳວັນຂອງຊາວບ້ານ ພ້ອມກັນນັ້ນກໍແມ່ນເສັ້ນທາງທີ່ຊາວບ້ານ ຫາບຫຼືເປັສະບຽງອາຫານໄປຂາຍໃຫ້ກອງທະຫານທັງສອງຝ່າຍຄື ຝ່າຍວຽງຈັນ ແລະ ຝ່າຍປະເທດລາວ ທີ່ຕັ້ງຄ້າຍນ້ອຍໃຫຍ່ ຢາຍຕາມຈອມພູ ອ້ອມປ້ອມໃຫຍ່ຫ້ວຍເຫົາໃນສະໄໝນັ້ນ, ຄ້າຍໃດຕ້ອງການຊື້ອັນໃດຊາວບ້ານກໍຊອກມາຂາຍໃຫ້.

ບ້ານນີ້ນ້ອຍແທ້ ແຕ່ມີຄວາມໝາຍສຳຄັນດ້ານທີ່ຕັ້ງຍຸດທະສາດການທະຫານ, ດ້ານຫຼັງຂອງບ້ານ ແມ່ນພູສູງທີ່ພົ້ນຂຶ້ນລື່ນເພິ່ນໃນເຂດນີ້, ເປັນສາຍພູຫຼາຍແງ່ມຍາວຢຽດໄປຫຼາຍພັນແມັດ ເໝາະສົມເປັນທີ່ຕັ້ງຄ້າຍທະຫານ, ຊຶ່ງຕົວຈິງກໍ່ເປັນແນວນັ້ນແທ້, ເປັນເຂດຍາດແຍ່ງລະຫວ່າງຝ່າຍວຽງຈັນແລະຝ່າຍແນວລາວຮັກຊາດ. ດ້ວຍເຫດຜົນອັນນີ້ ຈຶ່ງເປັນທີ່ມາຂອງເລື່ອງຕໍ່ໄປນີ້:

## ມື້ຝັນຮ້າຍຂອງຊີວິດ

ຕອນທ່ຽງມື້ນັ້ນ, ເດືອນສິບເອັດ, ເຂົ້າດໍກຳລັງເຫຼືອງເຕັມໄຮ່ ຫຼັງຈາກສຽງປືນທະຫານຫຼາຍຄ້າຍທັງສອງຝ່າຍທີ່ຍິງທັງປືນນ້ອຍປືນໃຫຍ່ສວານສານຂ້າມບ້ານໃສ່ກັນເປັນວຸ້ນໆ ຫຼາຍຊົ່ວໂມງຈຶ່ງໄດ້ສິ້ນສຸດລົງ, ຊາວບ້ານກໍ່ຄ່ອຍທະຍອຍອອກຈາກເຮືອນໄປທຳມາຫາກິນຕາມປົກກະຕິ ໂດຍບໍ່ຢ້ານກົວຕໍ່ເຫດການທີ່ຫາກໍ່ຜ່ານໄປ ເພາະວ່າມັນເປັນຄວາມຊິນເຄີຍຂອງຊາວບ້ານນີ້ມາດົນແລ້ວ. ໃນນັ້ນ ຄອບຄົວຂອງຂ້າພະເຈົ້າ ກໍ່ໄດ້ອອກໄປຊອກຢູ່ຫາກິນເຊັ່ນດຽວກັນ, ມີເອື້ອຍ (ລູກພໍ່ລຸງກາງ) ນ້ອງສາວຂອງລາວແລະ ຂ້າພະເຈົ້າອອກຈາກບ້ານມຸ່ງໜ້າໄປຫາສວນເພື່ອເກັບຜັກມາຮັບໃຊ້ໃນຄອບຄົວ. ພໍຍ່າງໄປເຂດປ່າຂອງບ້ານຊຶ່ງຫ່າງຈາກບ້ານປະມານຫ້າຮ້ອຍແມັດ, ທັງສາມຄົນກຳລັງຫ້າວທີ່ໄດ້ອອກບ້ານຕາມ ພາສາເດັກນ້ອຍ ທີ່ຖືກຂັງລີ້ລູກປືນ ຢູ່ໃນຂຸມເປັນເວລາຫຼາຍຊົ່ວໂມງ, ທັງເຕັ້ນທັງແລ່ນດ້ວຍຄວາມເບີກບານມ່ວນຊື່ນ

ຕາມເສັ້ນທາງຊົນນະບົດທີ່ຄົດລ້ຽວໂງເງໄປມາ, ທີ່ຈະຕ້ອງຫຼີກຕົ້ນໄມ້ໃຫຍ່ຫຼື ໂພນໃນປ່າ, ທັນໃດນັ້ນ, ສຽງລະເບີດດັງຂຶ້ນທາງໜ້າ ຕຸມ ! ດັງລັ່ນທົ່ວປ່າດົງ ຢ່າງສະນັ່ນຫວັ່ນໄຫວ ຕິດຕາມດ້ວຍສຽງຂີ້ຝຸ່ນລະເບີດແລະສຽງ ໃບໄມ້ລົ່ນດັງ ຊວ່າຊ່າແລ້ວກໍມິດໄປ, ເຫຼືອແຕ່ກິ່ນ ແລະ ຄວັນໝື້ປົກຄຸມບໍລິເວນນັ້ນ. ຂ້າພະເຈົ້າຄິດວ່າແມ່ນລູກປືນໃຫຍ່ຫຼືທາງມາຕິກແຖວນີ້ ບໍ່ໄດ້ລໍຊ້າ ຟ້າວ ແລ່ນ ກັບບ້ານດ້ວຍຄວາມໄວສູງ ພໍຢາກຕັດຕີນໝາມາຕໍ່ໃສ່ອີກ ແຕ່ບໍ່ພໍເທົ່າ ໃດກ້າວ ສຽງລະເບີດລູກທີ່ສອງກໍ່ດັງຂຶ້ນແຮງກວ່າເກົ່າຢູ່ຕໍ່ໜ້າ, ຂ້າພະເຈົ້າ ຮູ້ສຶກວ່າ ຮ້ອນວາບບາດໜຶ່ງ, ພະລາດລົ້ມລົງມື້ງ ໝົດສະຕິ.

ບໍ່ຮູ້ວ່າດົນນານປານໃດ, ມາຮູ້ເມື່ອຂຶ້ນຕອນຍິນເອລິກອບແຕກໍາລັງ ເລັ່ງສຽງດັງປານ ຕັບຊິແຕກ. ໄດ້ຍິນສຽງສັ່ງລາຂອງຜູ້ເຖົ້າຜູ້ແກ່ ສີຄຸ້ນໆແວ່ວ ເຂົ້າມາໃນຫູ, ມີບາງສຽງສະອຶກສະອື້ນຄ່ອຍໆຢູ່ໃກ້ໆແຕ່ກໍຈໍາບໍ່ໄດ້ ວ່າແມ່ນ ສຽງຂອງຜູ້ໃດ. ພະຍາຍາມມືນຕາແຕ່ບໍ່ຂຶ້ນ, ຮູ້ສຶກວ່າຮ່າງກາຍໜັກໄປໝົດ, ຂາຂວາບໍ່ຮູ້ສຶກເລີຍ.

- ໄປຮອດວຽງຈັນແລ້ວ ເບິ່ງເອົາຫຼານທັງສອງໃຫ້ດີເດີ້, ສຽງໜຶ່ງຄຸ້ນກ່ວາໝູ່ ສັ່ງລາທັງໄຫ້ຄ່ອຍໆ, ຈື່ໄດ້ແລ້ວ, ນັ້ນຄືສຽງຂອງແມ່ຂ້າພະເຈົ້າເອງ, ບໍ່ຮູ້ ວ່າເພິ່ນຮັກລູກຊໍ່າໃດ, ມີແຕ່ນໍ້າຕາທີ່ໄຫຼອອກມານັ້ນສະແດງຄວາມຮູ້ ສຶກໃຫ້ເຫັນກໍພຽງພໍແລ້ວ.
- ເອີ, ບໍ່ເປັນຫຍັງດອກ, ໝົດທຸກຄົນຢູ່ດີເດີ້, ເບິ່ງເຮືອນເບິ່ງຊານຖ້າ ບໍ່ດົນ ຈະກັບມາ, ສຽງຜູ້ຊາຍສູງອາຍຸຜູ້ໜຶ່ງກ່າວຕອບ. ຂ້າພະເຈົ້າຈື່ໄດ້ວ່າ ນີ້ ແມ່ນສຽງຂອງພໍ່ລູງໃຫຍ່ຕົ໋ວ, ສຽງສັ່ງລາຮູ້ສຶກວ່າຄ່ອຍລົງ, ຄ່ອຍລົງ ຈົນ ບໍ່ຈື່ວ່າແມ່ນສຽງໃຜແດ່ທີ່ສັ່ງລາກັນ,ໄດ້ຍິນສຽງເຮືອບິນ ເອເລກົບດັງແຮງ ຂຶ້ນ, ແຮງຂຶ້ນຈົນມັນເໜັງຍິດໆ ແລ້ວກໍຄ່ອຍທະຍານຂຶ້ນສູ່ທ້ອງຟ້າສີ ຄາມ ບິນຜ່ານທົ່ງໄຮ່ທົ່ງນາທີ່ເຫຼືອງເອັ່ມເຣີ່ມດ້ວຍເຂົ້າດໍ ໃນເດືອນຕຸລາ, ແລ້ວຂ້າພະເຈົ້າ ກໍໝົດສະຕິໄປອີກເທື່ອສອງ, ຮູ້ສຶກວ່າຝັນໄປ.

## ທີ່ໂຮງໝໍມະໂຫສົດວຽງຈັນ

ໃນຄວາມຝັນນັ້ນ, ຈື່ໄດ້ວ່າ ຂ້າພະເຈົ້າຍ່າງຜູ້ດຽວໂຊເຊຢູ່ໃນທະເລຊາຍທີ່ຮ້ອນວູ່ໆເຫັນຮອດແປວຄວາມຮ້ອນມະຍ່ອງມະແຍ່ງໄປຕາມອາກາດ, ຕົ້ນໄມ້ຕົ້ນຫຍ້າບໍ່ມີເລີຍ. ຂ້າພະເຈົ້າກຳລັງຈະໝົດແຮງຢູ່ແລ້ວ, ພໍດີມີຊາຍກາງຄົນຜູ້ໜຶ່ງພາຍປືນ, ແລ່ນມາອຸ້ມເອົາສັ່ນໆໃຫ້ຮູ້ເມື່ອ ແລ້ວກໍຖາມວ່າ :

- ເຈົ້າມາເຮັດຫຍັງແຖວນີ້ ? ບໍ່ຮູ້ບໍເພິ່ນຫ້າມຜ່ານ ? ຊາຍຜູ້ນັ້ນຖາມຂຶ້ນຊ້ອນສອງຄຳຖາມ
- ຂ້ອຍມາຊອກຫາພໍ່, ຂ້າພະເຈົ້າຕອບແບບເສີຍໆ, ຄືວ່າບໍ່ຢ້ານຈັກໜ້ອຍ.
- ມີໜັງສືເດີນທາງບໍ່ ? ລາວຖາມອີກ. ຂ້າພະເຈົ້າຊອກຖົງນັ້ນຖົງນີ້ຄືສິຈິ່ງວ່າມີຜູ້ເອົາໃຫ້, ແຕ່ແລ້ວກໍຊອກບໍ່ເຫັນໜັງສືນັ້ນ.
- ຂໍໂທດຫຼາຍໆ, ສິງໄສເສຍກາງທາງແລ້ວ, ຂ້າພະເຈົ້າກ່າວຕອບ.
- ຄັນຊັ້ນພໍ່ເຈົ້າຊື່ແນວໃດ ? ລາວຖາມສໍ້ຂຶ້ນ.
- ພໍ່ຂ້ອຍຊື່..ຂ້າພະເຈົ້າພວມຈະບອກຊື່ ພໍດີມີສຽງຮ້ອງດັງມາແຕ່ປະຕູກຳແພງ, ຊຶ່ງຫວ່າງ ກີ້ນີ້ບໍ່ເຫັນມີ.
- ເຮີຍ, ນາຍຍາມ, ນັ້ນແມ່ນລູກຊາຍຂ້ອຍເອງ, ປ່ອຍໃຫ້ມັນເຂົ້າມາແດ່. ຂ້າພະເຈົ້າຫຼຽວໄປເບິ່ງທາງທີ່ສຽງມາ, ເຫັນຊາຍຜູ້ໜຶ່ງສີຄຸ້ນໆໜ້າກຳລັງກວາກມືເອົາຂ້າພະເຈົ້າວັບໆຢູ່.
- ເຂົ້າບໍ່ໄດ້ດອກ, ລາວບໍ່ມີໜັງສື, ຊາຍທີ່ຢູ່ນຳຂ້າພະເຈົ້າຕອບ.
- ເຂົ້າໄດ້ແທ້, ລາວມາຢາມພໍ່ຊື່ໆ, ຮີບເຂົ້າມາ, ຊາຍທີ່ບອກວ່າເປັນພໍ່ເອີ້ນຢ້ຳອີກ.
- ໄປ, ເຂົ້າໄປຫາພໍ່ ບັກນ້ອຍ, ຢ່າດົນຫຼາຍເດີ, ລາວແນະນຳຕື່ມອີກ.

ຂ້າພະເຈົ້າຮີບຟ້າວຜ່ານປະຕູໄປເພາະແດດຮ້ອນຫຼາຍ, ພໍຂ້າມວິດກຳແພງຮູ້ສຶກວ່າເຢັນສະບາຍ ປານຫ້ອງຕິດແອ, ພໍ່ແລ່ນມາກອດຂ້າພະເຈົ້າດ້ວຍຄວາມດີໃຈແລະຖາມວ່າ :

- ເປັນແນວໃດ, ແມ່ແລະອ້າຍເອື້ອຍນ້ອງທຸກຄົນສະບາຍດີບໍ່ ?
- ກໍ່ສະບາຍດີຢູ່ ແຕ່ຕອນເຮົາມານີ້ ອີ່ແມ່ໄຫ້ນໍາ, ຂ້າພະເຈົ້າຕອບຕາມພາສາເດັກນ້ອຍ.
- ເອີ, ດີແລ້ວລູກເອີຍ, ເຫັນພໍ່ແລ້ວກໍຟ້າວກັບເມືອສາ, ຈັກໜ້ອຍແມ່ຊິຄອງ, ອີກຢ່າງໜຶ່ງ ລູກກໍບໍ່ທັນມີໜັງສືເດີນທາງ ຢູ່ບໍ່ທັນໄດ້ເທື່ອ,
- ຍາມເອີຍ, ເອົາລູກຊາຍໄປສົ່ງແດ່, ພໍ່ເອີ້ນໃສ່ຄົນທີ່ພາຍປືນ.

ຂ້າພະເຈົ້າຮອດບໍ່ທັນໄດ້ສັ່ງລາກໍຖືກຈູງແຂນອອກຈາກກໍາແພງ, ຮູ້ສຶກຮ້ອນວາບບາດໜຶ່ງ,ແລ້ວຄ່ອຍໆມືນຕາຂຶ້ນ ຕື່ນຈາກຄວາມຝັນ ແລະ ບໍ່ເຫັນໃຜ ເລີຍ, ບໍ່ຮູ້ວ່າຕົນເອງຢູ່ໃສ ແລະເປັນຫຍັງຈຶ່ງ ຢູ່ໃນທ່ານອນທາງຍຄືແນວນີ້, ມືນຕາຂຶ້ນຄ່ອຍໆ ສີຝາດໆ, ແນມເຫັນດອກໄຟຟ້າປ້ອມຮຸ່ງໆ ຢ່ອນຍາວລົງມາແຕ່ເພດານ, ເຫັນຈີ້ຈັ່ງມສອງໂຕ ແລ່ນໄລ່ຍອກກັນຢູ່ແຈເພດານ ສຽງກັດກັນດັງ ຈິບແຈບ ຈິບແຈບ. ນີ້ ມັນບໍ່ແມ່ນບ້ານເຮົາຕິ໋ວ, ຄິດໃນໃຈ, ເພາະວ່າບ້ານເຮົາບໍ່ມີໄຟຟ້າ, ບໍ່ມີຈີ້ຈັ່ງມ. ຂ້າພະເຈົ້າພະຍາຍາມຂິດແຂນເຂົ້າມາ ກໍບໍ່ເໜັງ, ພະຍາຍາມຂິດຂາມາກໍບໍ່ເໜັງ ຄືກັບວ່າບໍ່ແມ່ນຂອງເຮົາຈັກອັນ. ຂາຂວາມືນໄປໝົດບໍ່ຮູ້ສຶກຫຍັງເລີຍ. ຫຼຽວໄປຫຼຽວມາເຫັນແຂນແລະຂາຖືກມັດໝົດ. ຂ້າພະເຈົ້າກັດແຂ້ວ, ຄິດວ່າຈະພະຍາຍາມດີ້ນໝົດແຮງລອງເບິ່ງ ຈະເປັນແນວໃດ.

- ຢ່າດີ້ນ, ຢ່າດີ້ນ, ພໍ່ລຸງໃຫຍ່ຮ້ອງໃສ່ ພ້ອມທັງແລ່ນມາຈັບຮ່າງກາຍຂ້າພະເຈົ້າໄວ້. ຂ້າພະເຈົ້າເຫັນລຸງໃຫຍ່ແລ້ວຄ່ອຍອຸ່ນໃຈຂຶ້ນ ແລະຄ່ອຍໆຖາມເພິ່ນວ່າ :
- ເຮົາມາເຮັດຫຍັງຢູ່ນີ້ ? ແລະນີ້ແມ່ນຢູ່ໃສ ?

  ຢາກຖາມຫຼາຍໆແນວແຕ່ບໍ່ມີແຮງພໍ.
- ຫຼານເອີຍ, ເຮົາມານີ້ສາມຄືນ, ມີຫຼານ ເອື້ອຍຫຼານແລະລຸງໃຫຍ່ນີ້ລະ. ພວກຫຼານຖືກລະເບີດຢູ່ບ້ານເຮົາພູ້ນແຕ່ເພິ່ນປົວບໍ່ໄດ້, ຈຶ່ງສົ່ງມາປົວຢູ່

ວຽງຈັນພີ້. ເອື້ອຍຫຼານນອນຢູ່ຫ້ອງຕໍ່ໄປ, ຫວ່າງກີ້ນີ້ລຸງຫາກໍ່ໄປເບິ່ງມາ, ລາວກໍຮູ້ເມື່ອແລ້ວເຊັ່ນດຽວກັນ.

- ຫຼານເປັນຫຍັງແດ່ຈຶ່ງມັດແນວນີ້ ? ແກ້ບໍ່ໄດ້ບໍ່ ເຮົາຢູ່ຍາກແທ້ໆໄດລຸງ.
- ຫຼານຮັກເອີຍ, ບໍ່ຕ້ອງເສຍໃຈເດີ, ລຸງຈະເວົ້າຄວາມຈິງໃຫ້ຫຼານຟັງ. ຫຼານທັງສອງຄົນຖືກ ລະເບີດມາແຕ່ບ້ານໄດ້ສີ່ມື້ແລ້ວ, ມາຮອດໂຮງໝໍມະໂຫສົດວຽງຈັນນີ້ບາດກໍເລີ່ມເປື່ອຍ, ທ່ານໝໍຈຶ່ງໄດ້ຕັດຂາຜູ້ລະກໍ່າເທິງຫົວເຂົ່າເພື່ອກູ້ເອົາຊີວິດພວກຫຼານ, ບໍ່ດັ່ງຈະປົວນານເຊົາ ຫຼືອາດບໍ່ເຊົາ, ສ່ວນຫຼານຖືກມັດແຂນແລະຂານັ້ນ, ເພິ່ນຢ້ານຫຼານດີ້ນໄປຕໍາຕຽງ ແລ້ວບາດຊິອອກເລືອດ, ລຸງໃຫຍ່ອະທິບາຍຊ້າໆໃຫ້ຟັງ. ພໍແຕ່ໄດ້ຍິນຄໍາວ່າຕັດຂາເໝືອນສຽງຟ້າຜ່າລົງກາງຫົວໃຈຂອງຂ້າພະເຈົ້າ ນໍ້າຕາແຫ່ງຄວາມເສຍໃຈໄຫຼຍ່າວອອກມາອຸ່ນໆ ລາດໄປຕາມແກ້ມຢ່າງບໍ່ສາມາດຢັບຢັ້ງໄດ້ເລີຍ. ຄິດວາດພາບໃນໃຈວ່າຕໍ່ໄປນີ້ ເຮົາຈະຢູ່ແນວໃດໃນຄອບຄົວ, ຖ້າວ່າຂາດຂາໄປເບື້ອງໜຶ່ງ, ສູ່ມື້ນີ້ກໍ່ທຸກຍາກພໍແຮງແລ້ວ ທີ່ເປັນລູກກໍາພ້າພໍ່, ອາໄສອ້າຍເອື້ອຍແລະແມ່ເປັນຜູ້ເບິ່ງແຍງ, ບັນຫາພິການຕະຫຼອດຊີວິດນີ້ຊໍ້າພັດມາຕື່ມໃສ່ອີກ ຕໍ່ໄປນີ້ຈະຊ່ວຍວຽກຄອບຄົວໄດ້ແນວໃດ, ຈະເປັນພາຫະໃຫ້ຄອບຄົວຊໍ່າໃດ, ອະນາຄົດຈະເປັນແນວໃດ ? ຄໍາຖາມເຫຼົ່ານີ້ສັບສົນຢູ່ໃນສະໝອງຢ່າງໄຮ້ຄໍາຕອບ, ເປັນຫຍັງບໍ່ຕາຍໃຫ້ມັນແລ້ວຊາດ, ໃນເວລາທີ່ແນວຄິດກໍາລັງສັບສົນຢູ່ນັ້ນ ສຽງລຸງໃຫຍ່ກໍດັງຂຶ້ນດ້ວຍຄວາມເຫັນໃຈຄືກັບວ່າເພິ່ນອ່ານໃຈເຮົາອອກ ເພິ່ນເວົ້າພ້ອມທັງຈັບມືຂ້າພະເຈົ້າທີ່ມີຜ້າພັນບາດມັດຢູ່ວ່າ :
- ຫຼານເອີຍ, ບໍ່ຕ້ອງເສຍໃຈ, ຊີວິດຍັງຢູ່ ຄວາມຫວັງຍັງມີ, ພີ່ນ້ອງພວກເຮົາກໍມີຫຼາຍຄົນ, ບໍ່ຫ່ອນປະໃຫ້ຫຼານຕາຍອຶດດອກ. ຢ່າງນ້ອຍສຸດ ຫຼານກໍຍັງມີຊີວິດຢູ່, ເຝົ້າເຮືອນຊານ, ໄລ່ ເປັດໄລ່ໄກ່ກໍຍັງພໍໄດ້, ຫູ ຕາແລະສະໝອງກໍຍັງດີ ຖ້າວ່າຕັດສິນໃຈສູ້ຊີວິດ ມື້ໜຶ່ງທາງ ໜ້າໂຊກອາດເຂົ້າຂ້າງຫຼານ ກໍເປັນໄດ້, ຫຼານເຫັນບໍ່ ຄົນເສຍອົງຄະອື່ນໆໃນບ້ານເຮົາກໍ່ຫຼາຍ

ຄົນ, ເຂົາເຈົ້າກໍຍັງມີຊີວິດຢູ່ຕາມພາສາຄົນພິການເຂົາເຈົ້າກໍ ເປັນສ່ວນໜຶ່ງຂອງສັງຄົມ, ໃຫ້ຫຼານຄິດດີໆ, ນອນພັກຜ່ອນສາ, ລູງຊິໄປຫາເອື້ອຍຫຼານກ່ອນ, ຢູ່ຫ້ອງທາງຂ້າງນີ້. ວ່າແລ້ວລຸງໃຫຍ່ກໍດຶງຜ້າຫົ່ມມາປົກຂ້າພະເຈົ້າ ແຕ່ຕີນຮອດຄໍ ຢ້ານວ່າ ແມງວັນຈະມາຕອມບາດເລັກໆນ້ອຍໆທີ່ສະເກັດລະເບີດດາດນຳແຄ່ງນຳຂາເຕັມໄປໝົດ, ສ່ວນຫຼາຍຕົກເກັດແຫ້ງດີແລ້ວ ຈາກນັ້ນເພິ່ນກໍຍ່າງອອກໄປ, ຄາດໃນໃຈວ່າອາດຈະແມ່ນໄປໃຫ້ກຳລັງໃຈເອື້ອຍຕໍ່ໄປອີກ.

ດ້ວຍຄວາມອິດເມື່ອຍທາງດ້ານຮ່າງກາຍ ກໍຄືດ້ານແນວຄິດຈິດໃຈຂ້າພະເຈົ້າກໍເຊືອບຫຼັບໄປດົນນານເທົ່າໃດກໍບໍ່ມີຜູ້ໃດຮູ້ເລີຍ. ສະພາບແຕ່ລະມື້ ກໍຄ້າຍຄືກັນຕ່າງແຕ່ວ່າອາການເຈັບປວດຄ່ອຍໆເຊົາຕາມລຳດັບນ້ອຍໄປຫາໃຫຍ່ ເຫຼືອແຕ່ບາດໃຫຍ່ບ່ອນດຽວຄືຂາໂຕ້ກາຍຫົວເຂົ່າຂຶ້ນມານ້ອຍໜຶ່ງ, ບໍ່ຢາກໃຫ້ທ່ານໝໍມາປ່ຽນຜ້າພັນບາດ ເພາະວ່າ ມັນເຈັບເຫຼືອເກີນ, ເວລາທ່ານໝໍແກ້ຜ້າເກົ່າອອກ ເທື່ອລະຊັ້ນມາໃກ້ຊິຮອດຮອບສຸດທ້າຍ ຈັ່ງແມ່ນບໍ່ມ່ວນຈັກດີ້, ຜ້າພັນພາດແຫ້ງຕິດກັບບາດບັກໃຫຍ່ແດງຈື່ງຄື່ງ, ຈັກວ່າແດງເລືອດ ຫຼືແດງຢາແດງ, ຮູ້ແຕ່ວ່າເຈັບຂະໜາດເລີຍ, ເຈັບຊ່ຳໃດນັ້ນບໍ່ມີຕົວເລກໝາຍ ແຕ່ສຳລັບເດັກນ້ອຍຫ້າປີຊ່ຳຂ້າພະເຈົ້າແລ້ວບໍ່ຢາກໃຫ້ເວົ້າເຖິງເລີຍ. ທ່ານ ໝໍແກ້ອອກຄ່ອຍໆ ພໍຮອດສິ້ນແຂງໆສຸດ ເພິ່ນກໍດຶງປຶດໄວໆໂລດ,ຕອນນີ້ລະເຈັບກ່ວາໝູ່ໃນໂລກ ບາງເທື່ອກໍມີຊີ້ນຕິດອອກມາ, ທ່ານໝໍໃຫ້ເຫດຜົນວ່າດຶງໄວເຈັບບາດດຽວແລະແລ້ວໄວ, ຖ້າດຶງຊ້າເຈັບດົນກ່ວາ, ບາງເທື່ອກໍເລືອດໄຫຼອອກຕ້ອງຮີບຟ້າວລ້າງບາດແລ້ວພັນຜ້າໃໝ່ໃສ່ໄວໆ ຕອນລ້າງບາດກໍບໍ່ໃຫ້ເວົ້າເລີຍ, ລ້າງດ້ວຍເຫຼົ້າເກົ້າສິບເພື່ອຂ້າເຊື້ອ. ຫຼາຍວັນເປັນອາທິດ, ຫຼາຍອາທິດກາຍເປັນເດືອນ ແລ້ວກໍເດືອນເຄິ່ງ, ບາດແຜທີ່ຜ່າຕັດຄ່ອຍຈອດແລ້ວກໍເຊົາເຈັບ ເຫັນແຕ່ບັນດາແປ້ວຕາມຂາເບື້ອງທີ່ຍັງຢູ່ທັງນ້ອຍທັງໃຫຍ່ ຢິງຢາຍໄປທົ່ວຫົວເຂົ່າແລະຂາໂຕ້. ມາຮອດນີ້ສະ

ພາບການ ດ້ານແນວຄິດກໍຄ່ອຍປ່ຽນໄປ, ໃນໂຮງໝໍກໍ່ເຫັນມີຄົນເຈັບເສຍຂາຜູ້ອື່ນໆ ທີ່ຢູ່ໃນສະພາບດຽວກັນ, ບາງແລງລຸງໃຫຍ່ກໍເອົາລໍ້ຍູ້ຫຼານທັງສອງຄົນໄປເບິ່ງນໍ້າຂອງເພື່ອຜ່ອນຄາຍຄວາມຕຶງຄຽດກັງວົນທັງຫຼາຍ. ມີມື້ໜຶ່ງລຸງໃຫຍ່ເອີ່ຍປາກບອກຫຼານທັງສອງຄົນວ່າ :

- ຫຼານເອີຍ, ພວກເຈົ້າທັງສອງຄົນກໍຫາຍເປັນປົກກະຕິແລ້ວ, ລຸງຈະໄດ້ກັບບ້ານກ່ອນ, ສ່ວນພວກຫຼານບໍ່ທັນໄດ້ກັບເທື່ອເພາະວ່າບ້ານເຮົາຍັງມີສົງຄາມຢູ່ບໍ່ສະດວກ, ອີກອັນໜຶ່ງສຳຄັນທີ່ສຸດແມ່ນການເຂົ້າໂຮງຮຽນ, ຖ້າພວກຫຼານບໍ່ກັບ ກໍ່ຈະໄດ້ເຂົ້າໂຮງຮຽນ ຖ້າວ່າເມືອແມ່ນໝົດໂອກາດເພາະບ້ານເຮົາບໍ່ທັນມີໂຮງຮຽນເທື່ອ, ມີກໍຢູ່ຫ່າງໄກ.
- ເອີ່າ, ຄັນຊັ້ນພວກຫຼານຊິຢູ່ນຳໃຜ ? ຂ້າພະເຈົ້າຖາມຂຶ້ນດ້ວຍຄວາມຢາກຮູ້.
- ບໍ່ຍາກດອກ, ລຸງຕອບແບບເສີຍໆ, ລຸງຈະພາພວກເຈົ້າໄປຝາກນຳພີ່ນ້ອງຢູ່ຊຽງຂວາງເພື່ອຮຽນໜັງສື. ສ່ວນລຸງເອງກໍຈະກັບບ້ານໄປເບິ່ງຄອບຄົວກ່ອນ ບໍ່ຮູ້ວ່າດົນປານນີ້ ໄທເຮືອນພາກັນຢູ່ກິນແນວໃດແລ້ວ, ຖ້າວ່າບ້ານເມືອງສະຫງົບ ເງື່ອນໄຂຮັບປະກັນແລ້ວຈະມາຮັບເອົາພວກຫຼານ, ຂໍໃຫ້ພວກຫຼານຈົ່ງເຫັນແກ່ອະນາຄົດ, ເພິ່ນສະຫຼຸບຫຍໍ້ໃຫ້ຟັງ.
- ເອີ່າແຕ່ລຸງໃຫຍ່ວ່າແລ້ວ, ພວກຫຼານບໍ່ຂັດຂ້ອງ, ເອື້ອຍຕອບແທນທັງສອງຄົນ.
- ດີແລ້ວຫຼານເອີຍ, ກຽມເຄື່ອງກຽມຂອງອອກໂຮງໝໍ, ມື້ອື່ນເຊົ້າລົດຈະມາຮັບໄປຂຶ້ນຍົນໄປຊຽງຂວາງ, ລຸງໃຫຍ່ເວົ້າຄືກັນກັບວ່າເພິ່ນວາງແຜນຮຽບຮ້ອຍແລ້ວຈຶ່ງມາຖາມພວກຫຼານ.

# ຄວາມສັບສົນຊ້ຳເຕີມ

ມາຮອດເດີ່ນຍົນໂພນສະຫວັນ, ສອບຖາມເບິ່ງແລ້ວຖືກແຜນລຸງໃຫຍ່ໝົດ, ບໍ່ມີຍົນໄປຊຳເໜືອ, ມີແຕ່ຂີ່ລົດທາງດຽວ. ລຸງໃຫຍ່ພາພວກຫຼານໄປຝາກໄວ້ນຳພີ່ນ້ອງລໍຖ້າເຂົ້າໂຮງຮຽນ ເພາະໄລຍະນັ້ນກໍຂ້ອນຂ້າງທ້າຍສົກຮຽນ ດັ່ງນັ້ນຈຶ່ງບໍ່ໄດ້ເຮັດວຽກຫຍັງ ມີແຕ່ຮັກສາສຸກຂະພາບຈິດແລະຮ່າງກາຍໃຫ້ດີ, ແຕ່ຈະດີໄດ້ແນວໃດ, ໃນເມື່ອບໍ່ພໍທໍ່ໃດມື້ທີ່ມາຢູ່ລາດຮ່ວງຊຽງ ຂວາງ ກໍໄດ້ຮັບຂ່າວຮ້າຍຊ້ຳເຕີມອີກວ່າ ເອື້ອຍຄີງໆຂອງຂ້າພະເຈົ້າໄດ້ຖືກ ລະເບີດແລະຖືກສົ່ງມາປິ່ນປົວຢູ່ວຽງຈັນອີກແລ້ວ, ແຕ່ວ່າເທື່ອນີ້ລຸງໃຫຍ່ບໍ່ໄດ້ມາຕິດຕາມເບິ່ງແຍງນຳ ເພາະວ່າຫາກໍກັບຮອດບ້ານຍັງບໍ່ທັນໄດ້ເຊົາເມື່ອຍຊ້ຳ, ເວົ້າມາກໍຄິດເຫັນໃຈລຸງໃຫຍ່ທີ່ເອົາໃຈໃສ່ ຊ່ວຍເບິ່ງແຍງພວກຂ້າເຈົ້າເອົາແທ້ເອົາວ່າຕະຫຼອດຫຼາຍເດືອນຜ່ານມາ.

ໄດ້ຮັບຂ່າວຮ້າຍແລ້ວ ຢູ່ບໍ່ໄດ້ກິນບໍ່ເປັນຢາກໄປວຽງຈັນເພື່ອເບິ່ງເອື້ອຍເພາະ ບໍ່ມີພີ່ນ້ອງເລີຍນອກຈາກການຈັດຕັ້ງຂອງໂຮງໝໍແລະປະຊາສົງເຄາະ. ພີ່ນ້ອງທີ່ໃຫ້ອາໄສຢູ່ນຳກໍເຫັນໃຈແລະຄົ້ນຄ້ວາໃຫ້ໄດ້ໄປວຽງຈັນຕາມຈຸດປະສົງຂອງພວກຂ້າພະເຈົ້າ. ສອງສາມມື້ຕໍ່ມາພວກຂ້າເຈົ້າກໍມາຮອດວຽງຈັນ, ມ້ຽນເຄື່ອງແລ້ວກໍຮີບພາກັນໄປເບິ່ງເອື້ອຍຢູ່ໂຮງໝໍ.

- ພວກເຈົ້າກັບມາຫຍັງອີກ ? ແພດທີ່ເຄີຍປິ່ນປົວພວກຂ້າພະເຈົ້າເດືອນແລ້ວນີ້ຖາມເມື່ອເຫັນພວກຂ້າພະເຈົ້າກັບໄປໂຮງໝໍ.
- ພວກນ້ອງມາຢາມເອື້ອຍຖືກລະເບີດມາແຕ່ຊຳເໜືອທິດແລ້ວນີ້ ຊື່ ນູ, ພວກອ້າຍປະກົດເຫັນບໍ່ ? ນ້າສາວຂ້າພະເຈົ້າຖາມຂຶ້ນດ້ວຍຄວາມຮ້ອນໃຈ
- ເຫັນແທ້, ທ່ານໝໍຕອບ. ອາທິດແລ້ວນີ້ຄົນເຈັບມາແຕ່ຊຳເໜືອມີສອງຄົນ, ທະຫານຜູ້ໜຶ່ງແລະຜູ້ຍິງສາວຜູ້ໜຶ່ງ, ແຕ່ວ່າຜູ້ຍິງນັ້ນ ບາດແຜໜັກຫຼາຍ ທົນບໍ່ໄຫວ ໄດ້ເສຍຊີວິດແລ້ວຫຼັງຈາກເຂົ້າມາໂຮງໝໍໄດ້ສອງມື້, ທ່ານໝໍເສຍໃຈນຳເດີ້, ທາງໂຮງໝໍຈັດການຮຽບຮ້ອຍແລ້ວ.

ພໍທ່ານໝໍເວົ້າສຸດ, ປານໄກ່ຖືກຄ້ອນ, ຂ້າພະເຈົ້າງຶງໄປໝົດ, ປາກບໍ່ອອກ, ບອກບໍ່ຖືກເລີຍ ວ່າຮູ້ສຶກແນວໃດ, ໄດ້ແຕ່ຄິດໃນໃຈວ່າເປັນຫຍັງຄອບຄົວຂອງຂ້າພະເຈົ້າຄືໂຊກຮ້າຍແທ້, ກຳອັນໃດໜໍທີ່ ນຳມາສະໜອງເຖິງພຽງນີ້, ຄວາມຕັ້ງໃຈສິ້ນສຸດລົງ ດ້ວຍຄວາມຂົມຂື່ນ, ທີ່ເອື້ອຍຄີງໆ ທີ່ຈະເປັນບ່ອນອີງໃນອະນາຄົດ ເສຍໄປໂດຍບໍ່ກັບຄືນມາແລ້ວ. ແນວຄິດຕອນນີ້ປຸ່ນໄປ, ບໍ່ຢາກກັບບ້ານອີກແລ້ວຕາບໃດທີ່ສະພາບບ້ານເມືອງຍັງມີສົງຄາມຢູ່ເພາະຄວາມແນ່ນອນບໍ່ມີ, ຈັກຊິແຕກເສິກມື້ໃດ, ໃຜຊິເຈ່ຍເຮົາປົບເສິກ, ຈັກຊິຍ້າຍບ້ານມື້ໃດ, ຈັກໃຜຊິເຄາະຮ້າຍອີກໃນຂັ້ນຕໍ່ໄປ, ພາກັນຕັດສິນໃຈຢູ່ວຽງຈັນໂດຍຂໍຢູ່ນຳກົມປະຊາສົງເຄາະພໍໄດ້ມີບ່ອນຢູ່ອາໄສແລະຮຽນໜັງສື. ສູນປະຊາສົງເຄາະເວລານັ້ນແມ່ນຢູ່ຄຸ້ມສີຫອມ. ມີສະມາຊິກພິການນຳກັນສິບປາຍຄົນແຕ່ມາພິເສດຢູ່ບ່ອນວ່າ ພວກຂ້າພະເຈົ້າເປັນເດັກນ້ອຍຫົກປີແລະສິບເອັດປີ ເຫຼືອນັ້ນກໍແມ່ນຜູ້ໃຫຍ່ໝົດ.

ແຕ່ລະມື້ ຫຼັງຈາກປັ້ນເຂົ້າແລ້ວ ແຕ່ລະຄົນກໍເຮັດວຽກໃຜລາວເພື່ອຂ້າເວລາແລະເພື່ອບໍ່ໃຫ້ຄິດເຖິງຊີວິດອັນໝົ່ນໝອງຂອງຕົນ, ບາງຄົນກໍສານແຫ, ບາງຄົນກໍຖັກແສ່ວຫຼືອ່ານປຶ້ມຕ່າງໆຕາມຄວາມຖະໜັດຂອງໃຜລາວ. ພວກຂ້າພະເຈົ້າທັງສອງຄົນມາໃໝ່ຖືກເອົາໄປຝາກເຂົ້າໂຮງຮຽນຊັ້ນປໍໜຶ່ງ ຢູ່ໂຮງຮຽນປະຖົມເຈົ້າອານຸ. ແຕ່ວ່າ, ຟ້າເອີຍ ບັນຫາຫຍໍ້ທໍ້ໃໝ່ເກີດຂຶ້ນອີກຈົນໄດ້. ພວກຂ້າພະເຈົ້າກາຍເປັນຕົວປະຫຼາດໃນໂຮງຮຽນດັ່ງກ່າວ, ຍ້ອນວ່າສັກໄມ້ຄ້ຳໄປໂຮງຮຽນ,ໄປທາງໃດກໍມີເດັກນ້ອຍນັກຮຽນແຫ່ຫຸ້ມເບິ່ງ, ບາງຄົນກໍເວົ້າສຽດສີແທງຈິດໃຈເຮົາເຊັ່ນຮ້ອງໃສ່ ບັກຂາກຸດ, ບັກຂາຂາດ, ບັກຂາໄມ້ ຮ້າຍກ່ວານັ້ນ ຂີ້ດື້ບາງຄົນມາເຕະຂາໄມ້ອອກ ໃຫ້ລົ້ມແລ້ວກໍພາກັນຫົວໂຮຮ້ອງດີໃຈ : ມັນລົ້ມແລ້ວ ມັນລົ້ມແລ້ວແລະອື່ນໆ, ສ່ວນຂ້າພະເຈົ້າຮ້ອງໄຫ້ດ້ວຍຄວາມເຈັບໃຈແລະອາຍ, ໄດ້ແຕ່ກັດແຂ້ວໄວ້, ຄິດໃນໃຈວ່າ ມຶງເດີ ມື້ໜຶ່ງທາກຊິເຫັນ. ນາຍຄູກໍຮູ້ເຫັນສະພາບອັນນີ້ ແຕ່ກໍໄດ້ແຕ່ຕັກເຕືອນພວກຂີ້ດື້ບໍ່

ໃຫ້ເຮັດ ແຕ່ພໍວິດສາຍຕາຄູກໍເຮັດຄືເກົ່າໂດຍສະເພາະເວລາເລີກໂຮງຮຽນ ແລະເວລາມາໂຮງຮຽນ. ເຫດການ ອັນບໍ່ມ່ວນນີ້ ດຳເນີນໄປຫຼາຍເດືອນກໍຄ່ອຍໆຈາງໄປດ້ວຍຄວາມຊີນເຄີຍທາງສອງຝ່າຍ.

ກົງກັນຂ້າມກັບພວກຜູ້ເຖົ້າຜູ້ແກ່ຕາມເຮືອນແຄມທາງ ເວລາເຫັນຍ່າງກາຍ ໜ້າບ້ານໄປ ບາງຜ່ອງຈິ່ມອິດູຕົນຊາດມະນຸດດ້ວຍກັນຈົນນ້ຳຕາອອກ, ທັງຈົ່ມພຶມພຳວ່າ ເຮັດແນວໃດເດັກນ້ອຍໆກໍແຂ່ງກຸດຂາຂາດ, ບາງຜ່ອງກໍເອົາເງິນມາຍື່ນໃຫ້ຜູ້ລະກັບສອງກັບ ດ້ວຍຄວາມສົງສານ ທັ້ງໆທີ່ເຮົາບໍ່ໄດ້ຂໍແລະກໍບໍ່ແມ່ນຄົນຂໍທານ ແລະກໍບໍ່ປາຖະໜາເປັນເພາະມັນເປັນການເສຍກຽດແລະຊື່ສຽງຂອງຄອບຄົວ, ບາງຄົນກໍຢາກໄດ້ໄປເປັນລູກລ້ຽງ ແຕ່ທາງສູນບໍ່ອານຸຍາດໃຫ້.

ຫຼາຍເດືອນຜ່ານໄປ, ເມື່ອບາດແຜເຊົາປົກກະຕິແລ້ວທາງສູນໄດ້ພາໄປວັດແທກຢູ່ອີງຄະທຽມເພື່ອເຮັດຂາທຽມໃສ່, ຄິດວ່າບາດນີ້ລະ ຈະສະດວກສະບາຍ ໃນການໄປມາ. ໃຊ້ເວລາທຽວໄປແທກ ໄປລອງ ໄປທົດລອງ ໄປຮຽນຍ່າງເປັນເວລາ ປະມານເດືອນໜຶ່ງກໍໄດ້ຂາທຽມມາຍ່າງທົດລອງຢູ່ກາງບ້ານ. ຍ່າງທຳອິດ ກໍຄ້າຍຄືມະນຸດ ອາວະກາດຍ່າງ, ຍັງບໍ່ຊຳນານ ບາງເທື່ອກໍລົ້ມປ່າງງ່າງແບບປ້ອງກັນໂຕເອງບໍ່ໄດ້ເລີຍ. ພວກນັກຮຽນ ຂີ້ດີ້ ເຫັນບາງຄົນ ກໍມາ ຈັບແຂນພາແລ່ນ, ຈັ້ງບໍ່ທັນກໍລົ້ມ.

ດ້ານການຮຽນກໍບໍ່ໄດ້ດີປານໃດ ຍ້ອນຫຼາຍສາເຫດເຊັ່ນ ເປັນຄົນບ້ານນອກເຂົ້າເມືອງ ແນ່ນອນພາສາກໍແຕກຕ່າງກັນຢູ່ແລ້ວ, ຄວາມກົດດັນດ້ານສັງຄົມ ໂດຍສະເພາະນັກຮຽນແລະເດັກນ້ອຍຂີ້ດີ້ອ້ອມຂ້າງ ເຮັດໃຫ້ມີໂປມດ້ອຍໃນໃຈຕະຫຼອດມາ ເປັນສັງຄົມທີ່ບໍ່ໜ້າຢູ່ ສຳລັບຂ້າພະເຈົ້າ, ເຮັດໃຫ້ຄິດຮອດບ້ານເກີດ, ຄິດຮອດແມ່, ອ້າຍ, ນ້ອງ ໝູ່ເພື່ອນແລະພີ່ນ້ອງປ້ອງປາຍທັງໝົດ. ຄິດວ່າຖ້າວ່າຢູ່ໃນຄອບຄົວເຮົາເອງ ບັນຫາດູຖູກຢຽດຫຍາມແບບນີ້ຄົງ

ບໍ່ເກີດຂຶ້ນແນ່ນອນ, ມີແຕ່ຄວາມເຫັນອົກເຫັນໃຈອີດູຕົນສົງສານແບບຄອບຄົວຫຼາຍ ດັ່ງນັ້ນເມື່ອສິ້ນສົງຄາມຈຶ່ງຂໍເມືອຢາມບ້ານລອງເບິ່ງວ່າຈະເປັນແນວໃດ ເພາະວ່າສະພາບການຢູ່ທາງບ້ານກໍຄ່ອຍສະງົບລົງຫຼາຍແລ້ວ.

## ກັບຄືນສູ່ບ້ານເກີດ

ໃນເຮືອບິນນ້ອຍບີເວີລຳນັ້ນມີແຕ່ຄົນຂີ່ສາມຄົນ, ນັກບິນ, ຜູ້ນຳສົ່ງ ແລະ ຂ້າພະເຈົ້າ. ຈະໄດ້ເມືອຢາມບ້ານແລ້ວ, ແຕ່ວ່າຄວາມຄິດໃນໃຈຍັງສັບສົນລະຫວ່າງອັນເກົ່າແລະອັນໃໝ່ ເຊັ່ນດີໃຈທີ່ຈະໄດ້ພົບແມ່, ອ້າຍ, ນ້ອງໝູ່ເພື່ອນ ແລະພີ່ນ້ອງທັງໝົດພ້ອມທັງລຸງໃຫຍ່ ທີ່ຕິດຕາມໄປເບິ່ງເຮົາແຕ່ປີກ່ອນນັ້ນ, ຈະໄດ້ເຫັນເຂດບ້ານເກີດທີ່ເຕັມໄປດ້ວຍພູຜາປ່າໄມ້ ຫ້ວຍຮ່ອງ, ສວນກ້ວຍ, ສວນໝາກຫຸ່ງ, ສວນໝາກຄາຍ, ສວນມັນດ້າງມັນຕົ້ນທີ່ເຄີຍຂຸດປ່າໄມ້ຈ້າ ໄມ້ຂົມ ໄມ້ຮົກແລະບ່ອນອື່ນທີ່ເຄີຍແລ່ນຫຼິ້ນສະໄໝສອງປີກ່ອນ, ປານນີ້ຊິເປັນແນວໃດ ? ຍັງຄືເກົ່າບໍ່ຫຼືປ່ຽນແປງໄປໝົດແລ້ວ ? ອີກແນວຄິດໜຶ່ງຊ້ຳພັດຄິດນ້ອຍໃຈ ທີ່ບໍ່ມີໂອກາດຈະໄດ້ໄປເຮັດວຽກຄືເກົ່າແລ້ວ, ຕົນເອງອາດຈະເປັນພາລະໃຫ້ຄອບຄົວຕະຫຼອດໄປ.

ຫາມຈໍາໜ່າຍ

ເປັນເວລາປະມານສອງຊົ່ວໂມງທີ່ເຮືອບິນພາພວກເຮົາບິນມາແຕ່ວຽງຈັນ, ພໍຊ່ອງປ່ອງຢ້ຽມລົງໄປກໍເຫັນນ້ຳຊາໄຫຼຄົດໄປມາຕາມຕີນພູຫຼວງ, ຖະໜົນດິນແດງຄົດລ້ຽວຄຽງຄູ່ກັບແມ່ນ້ຳ, ບາງບ່ອນຖະໜົນຜ່ານຕົວເມືອງໄປ, ເຫັນລົດທະຫານແລ່ນຂີ້ຝຸ່ນໄງ່ກຸບຈົນບໍ່ເຫັນເສັ້ນທາງເບື້ອງກົ້ນລົດ.ສອງສາມນາທີຕໍ່ມາ ເຮືອບິນນ້ອຍລຳນັ້ນພາພວກຂ້າພະເຈົ້າລົງຈອດເດີ່ນນາທອງ, ຫຼຽວເບິ່ງຊາວຊົນນະບົດທີ່ໄປລົງລາດມາ ພາກັນແວ່ເບິ່ງເຮືອບິນທີ່ເຂົາເອີ້ນກັນຕາມພາສາທ້ອງຖິ່ນວ່ານົກເຫຼັກ.

ຂ້າພະເຈົ້າພາດສາຍຕາເບິ່ງລອບໆຂະບວນວ່າມີໄທເຮືອນຢູ່ໃນນັ້ນບໍ່, ແຕ່ວ່າເບິ່ງໄປມາສອງສາມຮອບ, ໂຊກບໍ່ເຂົ້າຂ້າງ, ບໍ່ເຫັນມີຜູ້ໃດຄຸ້ນຕາຈັກ ຄົນ.

- ອ້າຍສົ່ງຮອດແຕ່ນີ້ເດີ ນ້ອງຊາຍ, ບໍ່ມີລົດສົ່ງຮອດເຮືອນ, ຕໍ່ໄປກຸ້ມຕົນເອງ, ຜູ້ມາສົ່ງບອກຂ້າພະເຈົ້າ.
- ຂອບໃຈຫຼາຍໆເດີ, ບາງທີພວກເຮົາອາດໄດ້ພົບກັນອີກ, ລາກ່ອນ, ຂ້າພະເຈົ້າກ່າວ.

ເຄື່ອງຕິດໂຕກໍບໍ່ມີຫຼາຍ,ມີ ພຽງແຕ່ຖົງຫິ້ວນ້ອຍສອງໜ່ວຍ. ຂ້າພະເຈົ້າມານັ່ງຖ້າຢູ່ຮົ່ມໄມ້ແຄມທາງລໍຖ້າໄທບ້ານມາຮັບ. ບຶດໜຶ່ງມີລົດເຊແອມເຊທະຫານແລ່ນກາຍໄປ ຂີ້ຝຸ່ນໄງ່ກຸບຂຶ້ນ ໂສ້ງເສື້ອປຽນສີໝົດ. ຖ້າແລ້ວຖ້າອີກຈົນໃກ້ທ່ຽງ, ຄິດໃນໃຈວ່າຄົງຜິດຫວັງແລ້ວມື້ນີ້, ເພາະວ່າໄທບ້ານມາລົງລາດຂາຍເຄື່ອງໃນເມືອງ ຄືຊິເມືອໝົດແລ້ວສວາຍປານນີ້. ຈະເຮັດແນວໃດ, ຍ່າງເມືອເອງກໍຢ້ານບໍ່ຮອດ, ຈ້າງລົດກໍແຫ່ງໄກ ບໍ່ມີລົດຮັບຈ້າງເລີຍຍຸກນັ້ນ, ມີທາງດຽວຄືລັດລົດທະຫານ ແຕ່ວ່າ ມື້ນີ້ຊິມີລົດທະຫານກາຍແຖວນີ້ຫຼືບໍ່ ກໍບໍ່ຮູ້. ໃນເວລາທີ່ສະໝອງກຳລັງຊອກວິທີເມືອບ້ານນັ້ນ, ມີໄວລຸ້ນປະມານສິບສອງປີມາຢືນເບິ່ງສັງເກດຢູ່ທາງຂ້າງ ແລະຖາມຂຶ້ນວ່າ :

- ມາຖ້າພີ່ນ້ອງຮັບໄປບ້ານຫ້ວຍກົ້ນ*ບໍ່ ?
- ເອີ, ແມ່ນແລ້ວ, ຂ້າພະເຈົ້າຕອບ. ຂໍໂທດອ້າຍແມ່ນໃຜບໍ່ ? ຂ້າພະເຈົ້າຖາມຊ້ອນ.
- ອ້າຍກໍແມ່ນລູກນາຍກອງພີ່ນ້ອງດຽວກັບຄອບຄົວນ້ອງຫັ້ນເດ່, ລາວຕອບ.
- ເອີ ດີແລ້ວ, ມື້ນີ້ມີໄທບ້ານນ້ອງມາລົງຕະຫຼາດບໍ່ ? ຂ້າພະເຈົ້າຖາມລາວ.
- ມີແທ້, ແຕ່ປານນີ້ເຂົາເຈົ້າກັບໝົດແລ້ວ, ເມືອເຊົາເຮືອນອ້າຍກໍໄດ້, ມື້ອື່ນຈຶ່ງເມືອ,

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ